| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ |
| **ປະເພດເອກະສານ** | ໃບອະນຸຍາດດຳເນີນທຸລະກິດ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 26.08.2017 |
| **ພາກສ່ວນຮັບຜິດຊອບ** | ສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ<br>(021 217770;) |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງບໍລິສັດຫຼັກຊັບ<br>ຊຶ່ງສາມາດເຄື່ອນໄຫວທຸລະກິດ ປະເພດໃດໜຶ່ງ ດັ່ງນີ້: ທີ່ປຶກສາດ້ານການເງິນ<br>(ໃຫ້ຄຳປຶກສາກ່ຽວກັບ ການປັບປຸງໂຄງສ້າງດ້ານການ ຈັດຕັ້ງ, ການຄຸ້ມຄອງບໍລິຫານ,<br>ດ້ານການເງິນ ແລະ ອື່ນໆ ເພື່ອກະກຽມການອອກຈຳໜ່າຍຫລັກ ຊັບໃຫ້ແກ່ມວນຊົນ<br>ແລະ ການຈົດທະບຽນໃນຕະຫລາດຫລັກຊັບ), ນາຍໜ້າຊື້-ຂາຍຫລັກຊັບ (ເປັນສື່ການ<br>ຫລື ເປັນຕົວແທນ ເພື່ອດຳເນີນທຸລະກຳຊື້-ຂາຍຫລັກຊັບ ຕາມການສັ່ງຂອງລູກຄ້າ ແລະ<br>ໃຫ້ຄຳປຶກສາແກ່ຜູ້ລົງທຶນ) ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຫລັກຊັບ (ໃຫ້ການຄ້ຳ<br>ປະກັນການອອກຈຳໜ່າຍຫລັກຊັບ ດ້ວຍການຊ່ວຍຈຳໜ່າຍ ຫລື<br>ຮັບຊື້ຫລັກຊັບບາງສ່ວນ ຫລື ທັງໝົດ ຈາກບໍລິສັດອອກຈຳໜ່າຍຫລັກຊັບ<br>ໃນສ່ວນທີ່ຈຳໜ່າຍບໍ່ໝົດ ເພື່ອຮັບປະກັນຄວາມ<br>ສຳເລັດຂອງການອອກຈຳໜ່າຍຫລັກຊັບ) |

| | |
|---|---|
| **ເງື່ອນໄຂໃນການຂໍເອກະສານ** | 1. ມີທຶນຈົດທະບຽນຂັ້ນຕ່ຳ 5 ຕື້ກີບ ສຳລັບ ບໍລິສັດທີ່ສະໜອງບໍລິການທີ່ປຶກສາດ້ານການເງິນ; 30 ຕື້ກີບ ສຳລັບ ບໍລິສັດທີ່ສະໜອງບໍລິການນາຍໜ້າຊື້-ຂາຍຫລັກຊັບ; ແລະ 100 ຕື້ກີບ ສຳລັບ ບໍລິສັດທີ່ສະໜອງບໍລິການຄ້ຳປະກັນການອອກຈຳໜ່າຍຫລັກຊັບ 2. ມີຄູ່ຮ່ວມທຶນທີ່ເປັນທະນາຄານທຸລະກິດທີ່ຖືກສ້າງຕັ້ງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ຢ່າງໜ້ອຍໜຶ່ງຜູ້ຖືຮຸ້ນ ແລະ ຕ້ອງຖືຮຸ້ນລວມກັນ 30% ຂຶ້ນໄປ ກໍລະນີບໍລິສັດຫລັກຊັບ ປະເພດນາຍໜ້າຊື້-ຂາຍຫລັກຊັບ ແລະ ຄ້ຳປະກັນການອອກຈຳໜ່າຍຫລັກຊັບ ແລະ ມີຄູ່ຮ່ວມທຶນ ທີ່ເປັນນິຕິບຸກຄົນ ຫລື ນິຕິບຸກຄົນພາຍໃນ ທີ່ຖືກສ້າງຕັ້ງຂຶ້ນ ຕາມກົດໝາຍຂອງ ສປປ ລາວ ແລະ ຖືຮຸ້ນລວມກັນແຕ່ 10% ຂຶ້ນໄປ ສຳລັບ ປະເພດທີ່ປຶກສາດ້ານການເງິນ3. ມີຊື່ສຽງ ແລະ ມີສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການທີ່ມີຄວາມຮູ້ຄວາມສາມາດ ແລະ ປະສົບການ ໃນການດຳເນີນທຸລະກິດຫຼັກຊັບ, ການເງິນ-ການທະນາຄານ ຫຼື ການບັນຊີຢ່າງຕ່ຳ 5 ປີ4. ມີແຜນການດຳເນີນທຸລະກິດຢ່າງໜ້ອຍ 3 ປີທຳອິດ ພາຍຫລັງການສ້າງຕັ້ງ5. ມີຖານະການເງິນດີ ແລະ ໄດ້ຮັບການກວດສອບຈາກບໍລິສັດກວດສອບ 6. ບໍ່ຖືກດຳເນີນຄະດີ ຫລື ຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ສະຖານສໍ້ໂກງຊັບ, ຍັກຍອກຊັບ ແລະ ມີການກະທຳຜິດກ່ຽວກັບທຸລະກິດດ້ານຫລັກຊັບ, ການເງິນ-ການທະນາຄານ ຫລື ການບັນຊີ7. ຜູ້ຂໍອະນຸຍາດສ້າງຕັ້ງບໍລິສັດຫລັກຊັບ ຈາກຕ່າງປະເທດ ຕ້ອງແມ່ນ ບໍລິສັດຫລັກຊັບເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ຄລຕ ປະເທດຕົນ8. ກໍລະນີ ບໍລິສັດຫລັກຊັບ ປະເພດນາຍໜ້າຊື້-ຂາຍຫລັກຊັບ ແລະ ຄ້ຳປະກັນການອອກຈຳໜ່າຍຫລັກ ຊັບ ຕ້ອງມີສັນຍາຮ່ວມທຶນທະນາຄານດູແລຊັບສິນ ຢ່າງໜ້ອຍ 1 ທະນາຄານ ເພື່ອເຮັດໜ້າທີ່ໃນການຊຳລະ9. ພາຍຫລັງຈາກໄດ້ຮັບໃບອະນຸຍາດສ້າງຕັ້ງຊົ່ວຄາວ ຕ້ອງໄດ້ຖອກທຶນຄົບຖ້ວນ ຕາມອັດຕາສ່ວນ ຂອງຜູ້ຖືຮຸ້ນ10. ມີສຳນັກງານ ແລະ ອຸປະກອນຮັບໃຊ້ການດຳເນີນທຸລະກິດຫລັກຊັບທີ່ເໝາະສົມ ແລະ ທັນສະໄໝ11. ມີລະບົບການປະຕິບັດວຽກງານໃນແຕ່ລະພະແນກການ, ລະບົບການກວດກາ, ການຄວບຄຸມພາຍໃນ ແລະ ການບໍລິຫານຄວາມສ່ຽງ12. ມີນັກວິຊາຊີບທຸລະກິດຫລັກຊັບ ທີ່ມີໃບຢັ້ງຢືນວິຊາຊີບທຸລະກິດຫລັກຊັບ ຕາມປະເພດທີ່ໄດ້ຮັບ ອະນຸຍາດ ແລະ ມີພະນັກງານວິຊາການ ໃນຈຳນວນທີ່ເໝາະສົມ13. ຕ້ອງມີໂຄງປະກອບການຈັດຕັ້ງ ຊຶ່ງປະກອບດ້ວຍສະພາບໍລິຫານ, ຄະນະກຳມະການສະເພາະດ້ານຂອງສະພາບໍລິຫານ (ຄະນະກຳມະການກວດກາພາຍໃນ, ຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ ເປັນຕົ້ນ) ທີ່ມີຄຸນະສົມບັດ ແລະ ເງື່ອນໄຂຕາມກົດໝາຍ |

| **ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ** | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ລະບຽບວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ | 002/ຄຄຊ | 24.07.2013 | ມາດຕາ 3 ຫາມາດຕາ 7 ແລະ ມາດຕາ 13 |
| ກົດໝາຍວ່າດ້ວຍ ຫລັກຊັບ | 21/ສພຊ | 10.12.2012 | ພາກທີ IV ສະຖາບັນສື່ກາງດ້ານຫລັກຊັບໝວດທີ 1 ບໍລິສັດຫລັກຊັບ (ມາດຕາ 50 ຫາ ມາດຕາ 64) |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ບ້ານ ໂພນສະອາດ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ອີເມວ: lsco@lsc.gov.la | |
| **ໄລຍະເວລາໃນການ ພິຈາລະນາຄຳຮ້ອງ (ວັນ)** | 60 | 1. ໄລຍະເວລາການພິຈາລະນາເອກະສານ ເພື່ອອອກໃບອະນຸຍາດສ້າງຕັ້ງບໍລິສັດຫລັກຊັບຊົ່ວຄາວ ແມ່ນ30ວັນ2. ໃບອະນຸຍາດສ້າງຕັ້ງຊົ່ວຄາວ ແມ່ນຈະອອກໃຫ້ ພາຍໃນກຳນົດເວລາ30ວັນ ນັບແຕ່ການປະຕິບັດສຳເລັດເງື່ອນໄຂເພີ່ມເຕີມ (ເຊັ່ນ ການຖອກທຶນຈົດທະບຽນໃຫ້ຄົບຖ້ວນຕາມອັດຕາສ່ວນຂອງຜູ້ຖືຮຸ້ນ) |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກຳນົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນຳໃຊ້ຈັກເດືອນ?** |
| ບໍ່ມີ | 0 |

| | |
|---|---|
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸເອກະສານ** | |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸໃບອະນຸຍາດ** | ບໍ່ຕ້ອງມີການຕໍ່ອາຍຸໃບອະນຸຍາດສ້າງຕັ້ງ<br>ແຕ່ຕ້ອງຈ່າຍຄ່າຄຸ້ມຄອງປະຈຳປີ<br>ພາຍໃນໄຕມາດທີໜຶ່ງຂອງປີຖັດໄປ ໂດຍຄິດໄລ່ແຕ່ປີສ້າງຕັ້ງ<br>ເປັນຕົ້ນໄປ |

| **ຄ່າທຳນຽມສຳລັບການຍື່ນຂໍເອກະສານ** | | | | |
|---|---|---|---|---|
| **ມີຄ່າໃບຄຳຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າແບບຟອມຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 0.00 | 0.00 | 0.00 |
| **Comments** | ອີງໃສ່ ລະບຽບຂອງ ຄຄຊ ເລກທີ 002/ຄຄຊໃບອະນຸຍາດສ້າງຕັ້ງ ຄິດໄລ່ຄ່າທຳນຽມ ໃນອັດຕາ 0.1% ຂອງທຶນຈົດທະບຽນ ແລະ<br>ຕ້ອງຊຳລະໃນວັນທີໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນ.ສຳລັບຄ່າແບບຟອມຄຳຮ້ອງແມ່ນ-ສຳນັກງານໃຫຍ່: 20,000,000 ກີບ- ສາຂາ ແລະ ໜ່ວຍບໍລິການ 10,000,000 ກີບ | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນຄ່າ ທຳນຽມເພີ່ມເຕີມ** | | | | |

| **ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ** | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 0.00 | 30000000.00 | 30000000.00 |
| **ຄຳເຫັນ** | ສຳລັບບໍລິສັດຫຼັກຊັບຈະໄດ້ຈ່າຍຄ່າຄຸ້ມຄອງປະຈຳປີຈຳນວນ 0,1%<br>ຂອງລາຍຮັບທັງໝົດປະຈຳປີແຕ່ບໍ່ໃຫ້ຫຼຸດ 30,000,000 ກີບ<br>ຊຶ່ງຕ້ອງຊຳລະພາຍໃນໄຕມາດທີໜຶ່ງຂອງປີຖັດໄປໂດຍຄິດໄລ່ແຕ່ປີສ້າງຕັ້ງເປັນຕົ້ນໄປ. | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນກ່ຽວກັບຄ່າ ທຳນຽມຕໍ່ອາຍຸເພີ່ມເຕີມ** | | | | |